ເລກ 109.20
ວັນທີ 15 OCT 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ ເລກທີ: 41 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 11 ຕຸລາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 23-27/09/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,12% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງ ສ. ອາເມຣິກາ ອອກມາດີ ເຫັນໄດ້ຈາກຕົວເລກຄວາມເຊື່ອໝັ້ນຂອງຜູ້ບໍລິໂພກເພີ່ມຂຶ້ນ ຈາກລະດັບ 92,00 ຈຸດ ມາເປັນ ລະດັບ 93,20 ຈຸດ ເມື່ອທຽບໃສ່ເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກປະຊາຊົນທີ່ຂໍສະຫວັດດີການວ່າງງານຕໍ່ເນື່ອງມີຈຳນວນ 1,65 ລ້ານຄົນ ຫຼຸດລົງຈາກຈຳນວນ 1,66 ລ້ານຄົນໃນອາທິດທີ 14/09/2019 ເມື່ອທຽບໃສ່ອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 16-20/09/2019 | ອາທິດນີ້ 23-27/09/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1050 | 1,0928 | 1,12% |
| ເຢນ/ໂດລາ | 108,00 | 107,97 | 0,03% |
| ບາດ/ໂດລາ | 30,46 | 30,640 | -0,59% |
| ເປໂຊ/ໂດລາ | 51,94 | 51,92 | 0,05% |
| ຣູເປັຍ/ໂດລາ | 14.060,00 | 14.170,00 | -0,78% |
| ໂດລາສິງກະໂປ/ໂດລາ | 1,3754 | 1,3822 | -0,49% |
| ຢວນ/ໂດລາ | 7,0877 | 7,1278 | -0,56% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 3,91% ຈາກ 58,77 ໂດລາ/ບາເຣວ ມາເປັນ 56,47 ໂດລາ/ບາເຣວ ເນື່ອງຈາກການສະໜອງນ້ຳມັນຫຼາຍກວ່າຄວາມຕ້ອງການນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສ. ອາເມລິກາ ເພີ່ມຂຶ້ນ 2,41 ລ້ານບາເຣວໃນອາທິດທີ 20/09/2019 ຈາກເພີ່ມຂຶ້ນ 1,06 ລ້ານບາເຣວໃນອາທິດຜ່ານມາ. ພ້ອມກັນນັ້ນ, ລາຄານ້ຳມັນຍັງໄດ້ຮັບແຮງກົດດັນມາຈາກປະເທດທີ່ຜະລິດນ້ຳມັນລາຍໃຫຍ່ຂອງໂລກເປັນຕົ້ນປະເທດຊາອຸດິອາຣະເບຍ ໄດ້ອອກມາຢັ້ງຢືນວ່າຈະສາມາດກູ້ກຳລັງການຜະລິດນ້ຳມັນດິບກັບຄືນມາ ແລະ ສາມາດຜະລິດນ້ຳມັນດິບໄດ້ 11,3 ລ້ານບາເຣວ/ວັນ ພາຍໃນທ້າຍເດືອນ 09/2019.

- ລາຄາຄຳ ຫຼຸດລົງ 0,57% ຈາກ 1.503,79 ໂດລາ/ອອນ ມາເປັນ 1.495,23 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າຂຶ້ນ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ.

## 2. ສະພາບເງິນຕາພາຍໃນ

### 2.1 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 09/2019 ຄາດວ່າຈະຢູ່ໃນລະດັບ 3,89%.

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 1,88% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,46%;

- ປະລິມານເງິນ M2 ເພີ່ມຂຶ້ນ 1,39% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,02%.

### 2.3 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,26% ແລະ ແຂງຄ່າຂຶ້ນ 0,89% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 3,19% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 9,45% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 16-20/09/2019 | | | ອາທິດນີ້ 23-27/09/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.908,39 | 8.934,67 | 8.921,74 | 8.884,06 | 8.911,99 | 8.898,75 | 0,27% | 0,25% | 0,26% | -3,18% | -3,19% | -3,19% |
| ບາດ | 296,56 | 298,61 | 297,47 | 294,18 | 295,38 | 294,85 | 0,81% | 1,10% | 0,89% | -9,51% | -9,45% | -9,45% |

### 2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (20-26/09/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ເງິນໂດລາຊື້ສຸດທິ 0,47 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 36,57 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 36,10 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 326,11 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 595,55 ລ້ານບາດ ແລະ ຂາຍເງິນບາດໄດ້ 921,66 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 34,75% ແລະ ເງິນບາດ ເພີ່ມຂຶ້ນ 49,35%;

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລັ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໃຫ້ ທທກ ໂດຍການຂາຍເງິນໂດລາ ຈຳນວນ 0,26 ລ້ານໂດລາ ແລະ ຂາຍເງິນບາດ ຈຳນວນ 25,37%;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ເປັນເງິນໂດລາ ຈຳນວນ 0,77 ລ້ານໂດລາ ແລະ ເປັນເງິນບາດ ຈຳນວນ 62,50 ລ້ານບາດ;

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 13-19/09/2019 | | ອາທິດນີ້ 20-26/09/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **27,67** | **317,65** | **36,57** | **595,55** | **32,16%** | **87,49%** |
| - ທ/ຄທຸລະກິດລັດ | 8,65 | 35,24 | 7,34 | 22,00 | -15,14% | -37,57% |
| - ທ/ຄທຸລະກິດອື່ນໆ | 19,02 | 282,41 | 29,23 | 573,55 | 53,68% | 103,09% |
| **2. ການຂາຍເງິນຕາຕ່າງປະເທດ** | **26,26** | **698,25** | **36,10** | **921,66** | **37,47%** | **32,00%** |
| - ທ/ຄທຸລະກິດລັດ | 10,98 | 117,30 | 7,99 | 77,47 | -27,23% | -33,96% |
| - ທ/ຄທຸລະກິດອື່ນໆ | 15,28 | 580,95 | 28,11 | 844,19 | 83,97% | 45,31% |
| **ຊື້-ຂາຍສຸດທິ ທທກ** | **1,41** | **-380,60** | **0,47** | **-326,11** | **-66,67%** | **-14,32%** |
| - ຜິດດ່ຽງຊື້-ຂາຍ | 5,10% | -119,82% | 1,29% | -54,76% | -74,80% | -54,30% |
| **- ມູນຄ່າການຊື້-ຂາຍ** | **53,93** | **1,015,90** | **72,67** | **1.517,21** | **34,75%** | **49,35%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-3,28** | **0,00** | **-0,26** | **-25,37** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,28 | 0,00 | 0,26 | 25,37 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **1,10** | **84,00** | **0,77** | **62,50** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນເຂົ້າສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (20-26/09/2019) ຈຳນວນ 28,34 ລ້ານໂດລາ. ໃນນັ້ນ, ກະແສເງິນເຂົ້າມີຈຳນວນ 289,37 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 122,37 ລ້ານໂດລາ, ຖອນເງິນຝາກຈາກສະຖາບັນການເງິນຕ່າງປະເທດ ຈຳນວນ 35,99 ລ້ານໂດລາ ແລະ ເງິນກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 113,08 ລ້ານໂດລາສະຫະລັດ ແລະ ລາຍຮັບອື່ນໆ ຈຳນວນ 8,75 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼອອກ ຈຳນວນ 261,03 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 163,15 ລ້ານໂດລາສະຫະລັດ, ໂອນເງິນຝາກກັບສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 35,34 ລ້ານໂດລາສະຫະລັດ, ຊຳລະເງິນກູ້ຢືມຂອງຫົວໜ່ວຍທຸລະກິດຈຳນວນ 36,60 ລ້ານໂດລາສະຫະລັດ ແລະ ລາຍຈ່າຍອື່ນໆ ຈຳນວນ 17,06 ລ້ານໂດລາສະຫະລັດ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 560 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 32 ສະບັບ, ລວມມູນຄ່າໂອນທັງໝົດ 235.93 ຕື້ກີບ, ທຽບໃສ່ອາທິດຜ່ານມາ ຫຼຸດລົງ 8,13 ຕື້ກີບເທົ່າກັບ 3,33%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (20-26/9/2019) ມີທັງໝົດ 4.155 ຄັ້ງ ຫຼຸດລົງ 97 ຄັ້ງທຽບໃສ່ອາທິດທີ່ຜ່ານມາ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.987,43 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ເພີ່ມຂຶ້ນ 678,69 ຕື້ກີບ ຫຼື ເທົ່າກັບ 51,85%. ໃນນັ້ນ, ກະຊວງການເງິນ ມີການໂອນເງິນຈຳນວນ 108 ຄັ້ງ, ລວມມູນຄ່າໂອນທັງໝົດ 348,55 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນເງິນ 226,53 ຕື້ກີບ ເທົ່າກັບ 184,87%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 713,80 ຈຸດ ຫຼຸດລົງ ຈາກ 743,77 ຈຸດ ຫຼື ເທົ່າກັບ 4,03% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 347.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,94 ຕື້ກີບ ເພີ່ມຂຶ້ນ 77,49% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 24,46% ເຊິ່ງສະແດງໃຫ້ເຫັນວ່າຜູ້ລົງທຶນທີ່ມີບົດບາດໃນການຊື້-ຂາຍຂອງອາທິດນີ້ ຍັງແມ່ນຜູ້ລົງທຶນພາຍໃນປະເທດດ້ວຍກັນ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ໃນອາທິດນີ້ແມ່ນມາຈາກຫຼຸດລົງຂອງລາຄາຮຸ້ນ PTL, BCEL ແລະ SVN.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ (13-19/9/2019) | | | ອາທິດນີ້ (20-26/9/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 155.300 | 922.435.000 | 6.050 | 324.400 | 1.884.515.000 | 5.600 | 108,89 | 104,30 | -7,44 |
| **EDL-GEN** | 47.200 | 162.649.000 | 3.550 | 8.900 | 31.150.000 | 3.400 | -81,14 | -80,85 | -4,23 |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | 2.500 | 1.237.500 | 490 | 1.200 | 545.500 | 450 | -52,00 | -55,92 | -8,16 |
| **SVN** | 2.600 | 5.460.000 | 2.100 | 1.100 | 2.250.000 | 2.000 | -57,69 | -58,79 | -4,76 |
| **PCD** | - | - | 860 | 400 | 396.000 | 990 | - | - | 15,12 |
| **LCC** | 100 | 210.000 | 2.100 | - | - | 2.100 | -100,00 | -100,00 | - |
| **MHTL** | 200 | 590.000 | 2.900 | 10.600 | 30.028.000 | 2.780 | 5.200,00 | 4.989,49 | -4,14 |
| **LAT** | 500 | 400.000 | 800 | - | - | 800 | -100,00 | -100,00 | - |
| **VCL** | 5.500 | 5.320.000 | 1.040 | 500 | 520.000 | 1.000 | -90,91 | -90,23 | -3,85 |
| ທັງໝົດ | 213.900 | 1.098.301.500 | | 347.100 | 1.949.404.500 | | 62,27 | 77,49 | |

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ທຫລ ໄດ້ເຂົ້າຮ່ວມກອງປະຊຸມ ແລະ ພິທີສໍາຄັນຕ່າງໆທັງພາຍໃນ ແລະ ຕ່າງປະເທດເປັນຕົ້ນ: ❶ກອງປະຊຸມກະກຽມເນື້ອໃນ ເພື່ອລາຍງານຕໍ່ກອງປະຊຸມກົມການເມືອງສູນກາງພັກໃນທ້າຍເດືອນ ກັນຍາ 2019; ❷ກອງປະຊຸມລັດຖະບານສະໄໝສາມັນປະຈໍາເດືອນ ກັນຍາ 2019; ❸ກອງປະຊຸມ ເພື່ອລາຍງານສະພາບການເຄື່ອນໄຫວຂອງບັນດາລັດວິສາຫະກິດ, ວິສາຫະກິດປະສົມໂດຍການໂອ້ລົມຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ; ❹ກອງປະຊຸມຄົ້ນຄວ້າຮ່າງດໍາລັດ ວ່າດ້ວຍການຄຸ້ມຄອງສິນຄ້າທີ່ສາມາດນໍາໃຊ້ໄດ້ສອງດ້ານ; ❺ກອງປະຊຸມສໍາມະນາລະດັບສູງ SEACEN-BIS ແລະ ກອງປະຊຸມປະຈໍາປີຄະນະບໍລິຫານ SEACEN EXCO ຢູ່ ປະເທດ ສີລັງກາ; ❻ເຂົ້າຮ່ວມງານມະຫາກໍາວາງສະແດງສິນຄ້າ ແລະ ກອງປະຊຸມສຸດຍອດທຸລະກິດ ແລະ ການລົງທຶນຈີນ-ອາຊຽນ ຄັ້ງທີ 16 ແລະ ກອງປະຊຸມສຸດຍອດການຮ່ວມມືດ້ານການເງິນ ແລະ ເປີດກວ້າງການພັດທະນາທາງດ້ານການເງິນສໍາລັບບັນດາປະເທດອາຊຽນ ຄັ້ງທີ 11 ຢູ່ ປະເທດ ສປ. ຈີນ ແລະ ❼ກອງປະຊຸມສໍາມະນາກ່ຽວກັບວຽກງານການເຂົ້າເຖິງແຫຼ່ງທຶນ ແລະ ການສົ່ງເສີມບົດບາດຂອງແມ່ຍິງໃນຂົງເຂດເສດຖະກິດ-ການເງິນອາຊຽນ ("ASEAN Financial Inclusion Sympoisum 2019") ຢູ່ປະເທດຫວຽດນາມ.
- ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສໍາຄັນ ແລະ ວຽກງານປັ່ນອ້ອມຈໍານວນໜຶ່ງເປັນຕົ້ນ: ❶ກອງປະຊຸມກ່ຽວກັບການຈັດຕັ້ງປະຕິບັດກົນໄກການຫັນລະບົບການຊໍາລະສະສາງແຊັກເປັນຫັນສະໄໝຮ່ວມກັບທະນາຄານທຸລະກິດ ແລະ ບັນດາສາຂາ ທຫລ ແຕ່ລະພາກ; ❷ກອງປະຊຸມຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດປະເມີນຜົນການປະຕິບັດວຽກງານຂອງພະນັກງານ ທຫລ ປະຈໍາປີ 2018; ❸ກອງປະຊຸມສະພາບໍລິຫານສໍານັກງານປົກປ້ອງເງິນຝາກ ສະໄໝວິສາມັນ ຄັ້ງທີ I ປະຈໍາປີ 2019; ❹ກອງປະຊຸມກະກຽມການເຮັດວຽກຮ່ວມກັບອົງການກວດສອບແຫ່ງລັດ ທີ່ຈະມາກວດສອບເອກະສານລາຍງານການເງິນຂອງ ທຫລ ປະຈໍາປີ 2018; ❺ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍລະບົບການຊໍາລະໃຫ້ກັບທະນາຄານທຸລະກິດຈໍານວນໜຶ່ງ; ❻ກອງປະຊຸມຄົ້ນຄວ້າປັບປຸງນິຕິກໍາ ແລະ ກົນໄກ ເພື່ອຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການລົງທຶນໂດຍກົງຈາກຕ່າງປະເທດ (FDI) & ການຄ້າລະຫວ່າງປະເທດ; ❼ສ້າງຂະບວນການ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 51 ປີ ເປັນຕົ້ນແມ່ນ ການແຂ່ງຂັນກິລາເປຕັງ ແລະ ເປີດຢ້ຽມຊົມຫ້ອງວາງສະແດງ ທຫລ; ❽ພິທີແຂ່ງຂັນກິລາ ເພື່ອສະເຫຼີມສະຫຼອງຄົບຮອບ 20 ປີ ຂອງການສ້າງຕັ້ງສໍານັກງານປົກປ້ອງເງິນຝາກ. ພ້ອມກັນນັ້ນ, ຊາວໜຸ່ມຮາກຖານ ທຫລ ໄດ້ເຄື່ອນໄຫວຂະບວນການວິຊາສະເພາະໃນຫົວຂໍ້: ວຽກງານຕະຫຼາດຫຼັກຊັບການລະດົມທຶນຈາກມວນຊົນຢູ່ ສປປ ລາວ ແລະ ຈັດທະບຽນໃນຕະຫຼາດຫຼັກຊັບ.
- ທຫລ ໄດ້ສໍາເລັດການຕ້ອນຮັບເຂົ້າຢ້ຽມຂໍ່ານັບຈາກຄະນະຊ່ຽວຊານຈາກກອງທຶນການເງິນສາກົນ (IMF).
- ທຫລ ໄດ້ສໍາເລັດວຽກງານວິຊາສະເພາະທີ່ສໍາຄັນຈໍານວນໜຶ່ງເປັນຕົ້ນ: ❶ອອກຈໍາໜ່າຍພັນທະບັດອອມຊັບ ທຫລ ເປັນສະກຸນເງິນໂດລາສະຫະລັດ; ❷ອອກແຈ້ງການກ່ຽວກັບນໍາເອົາທະນະບັດປະເພດໃບ 500 ກີບ ສະບັບປັບປຸງໃໝ່ ອອກສູ່ຂອດຈໍລະຈອນ (ສະບັບເລກທີ 430/ທຫລ, ລົງວັນທີ 24 ກັນຍາ 2019); ❸ອອກຂໍ້ຕົກລົງວ່າດ້ວຍການສ້າງນິຕິກໍາຂອງທະນາຄານແຫ່ງ ສປປ ລາວ (ສະບັບເລກທີ 879/ທຫລ, ລົງວັນທີ 25 ກັນຍາ 2019); ❹ເຫັນດີໃຫ້ທະນາຄານໄຊງ່ອນເທືອງຕີນ ເປີດໃຫ້ບໍລິການ Mobile Banking; ❺ແຈ້ງເຫັນດີໃຫ້ທະນາຄານອຸດສາຫະກໍາ ແລະ ການຄ້າຈີນ ເພີ່ມຄຸນລັກສະນະການໂອນເງິນຂ້າມທະນາຄານພາຍໃນ-ຕ່າງປະເທດ ແລະ ໂອນເງິນໂດຍນໍາໃຊ້ QR Code ໃນຜະລິດຕະພັນ Mobile Banking ແລະ ❻ແຈ້ງເຫັນດີກ່ຽວກັບການເປີດສາຂາຂອງສະຖາບັນການເງິນ 01 ແຫ່ງ ແລະ ສໍາເລັດການລົງກວດກາ ບໍລິສັດ ເຊົ່າສິນເຊື່ອ ປະຈໍາປີ 2018 ຈໍານວນ 02 ແຫ່ງ (ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ແລະ ບໍລິສັດ ກຸງສີ ເຊົ່າສິນເຊື່ອ) ແລະ ສໍາເລັດວຽກສະເພາະກິດກ່ຽວກັບການແກ້ໄຂບັນຫາທີ່ຕິດພັນກັບ ບໍລິສັດ ອີອອນ ບໍລິການ ເຊົ່າສິນເຊື່ອ ຈໍາກັດ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ຄຸ້ມຄອງອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ. ພ້ອມທັງ, ຕິດຕາມສະພາບລາຄານ້ຳມັນຢູ່ພາຍໃນ ແລະ ສາກົນ, ຄ່າເງິນ ແລະ ເສດຖະກິດຂອງ ສປປ ລາວ ແລະ ລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ ພ້ອມທັງສືບຕໍ່ດຳເນີນມາດຕະການບໍລິຫານຕໍ່ຮ້ານແລກປ່ຽນທີ່ບໍ່ປະຕິບັດຕາມລະບຽບການທີ່ວາງອອກ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ຕາມແຜນທີ່ກຳນົດໄວ້; ເກັບກຳຂໍ້ມູນທາງການເງິນຂອງທະນາຄານທຸລະກິດ ເຂົ້າຖານຂໍ້ມູນປະຈຳເດືອນ 08/2019 ແລະ ຂຽນບົດວິເຄາະຖານະການເງິນຕາມຄວາມສ່ຽງປະຈຳໄຕມາດ I ແລະ II/2019.
- ສືບຕໍ່ຄົ້ນຄວ້າການສະເໜີຂໍສ້າງຕັ້ງສະຖາບັນການເງິນທີ່ບໍ່ແມ່ນທະນາຄານຈຳນວນໜຶ່ງ ແລະ ສືບຕໍ່ວຽກສະເພາະກິດກ່ຽວກັບການຕິດຕາມການແກ້ໄຂບັນຫາຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກຈຳນວນ 03 ແຫ່ງ (ເພື່ອການພັດທະນາ, ນິວຕັນ ແລະ ໂຊກໄຊ).
- ກະກຽມເຮັດວຽກຮ່ວມກັບຄະນະຊ່ຽວຊານ IMF-CDOT ໃນການສືບຕໍ່ໃຫ້ການຊ່ວຍເຫຼືອທາງດ້ານວິຊາການວຽກງານການປັບປຸງສະຖິຕິພາກຕ່າງປະເທດ.
- **ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກຄື:** ❶ກອງປະຊຸມວຽກພັດທະນາເຂດຈຸດສຸມໃຈກາງ (ໄຊສົມບູນ); ❷ກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້ "ສ້າງຄວາມເຂັ້ມແຂງທາງດ້ານນິຕິກຳ ແລະ ຍຸດທະສາດການພັດທະນາເສດຖະກິດ ແລະ ການເງິນແບບເຊື່ອມໂຍງ"; ❸ກອງປະຊຸມສຳມະນາກ່ຽວກັບການສ້າງຕາຕະລາງ Negative List ໃນສັນຍາການຄ້າດ້ານການບໍລິການ; ❹ກອງປະຊຸມປະຈຳປີໃນຫົວຂໍ້: ຄວາມໂປ່ງໃສ ແລະ ການປະຕິບັດຕາມ ຄັ້ງທີ່ IV ຢູ່ປະເທດ ສິງກະໂປ ແລະ ❺ພິທີມອບໃບຍ້ອງຍໍໃຫ້ແກ່ກົມກອງ ແລະ ບຸກຄົນ ທີ່ມີຜົນງານປະກອບສ່ວນຄົ້ນຄວ້າສ້າງເງື່ອນໄຂໃຫ້ ສປປ ລາວ ອອກຈາກບັນຊີສີເທົາ ແລະ ກອງປະຊຸມຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ).
- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆເປັນຕົ້ນ:** ❶ກອງປະຊຸມຄົ້ນຄວ້າປັບປຸງຮ່າງດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ ແລະ ຮ່າງດຳລັດບໍລິສັດຄ້ຳປະກັນສິນເຊື່ອ; ❷ກອງປະຊຸມເຜີຍແຜ່ລະບົບລາຍການນຳເງິນສົດເຂົ້າ-ອອກ ສປປ ລາວ; ❸ກອງປະຊຸມປຶກສາຫາລືກ່ຽວກັບຮ່າງບົດບັນທຶກຄວາມເຂົ້າໃຈສອງຝ່າຍ (MoU) ລະຫວ່າງ ທຫລ ແລະ ທະນາຄານປະຊາຊົນຈີນ; ❹ກອງປະຊຸມປຶກສາຫາລືຄົ້ນຄວ້າການກະກຽມກັບ ສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ເປັນນິຕິບຸກຄົນ; ❺ພິທີສະຫຼຸບຜົນງານ 20 ປີ ການເຄື່ອນໄຫວວຽກງານຂອງສຳນັກງານປົກປ້ອງເງິນຝາກ; ❻ພິທີແຂ່ງຂັນກິລາເປຕັງຮອບຊິງຊະນະເລີດ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 51 ປີ ແລະ ❼ພິທີສະເຫຼີມສະຫຼອງວັນຄູແຫ່ງຊາດ ທີ່ ໂຮງຮຽນອະນຸບານ ທຫລ ແລະ ສະຖາບັນການທະນາຄານ.
- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບທ່ານ** ມາກຄ໌ ໂອແບ, ຫົວໜ້າ ຜູ້ບໍລິຫານໃຫຍ່ BRED International, ປະທານສະພາບໍລິຫານ ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL), ສະມາຊິກສະພາຜູ້ບໍລິຫານ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BCEL, ສະມາຊິກສະພາບໍລິຫານຂອງທະນາຄານ ເອຊີລີດາ ກຳປູເຈຍ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ເພັດສະຖາພອນ ແກ້ວວົງວິຈິດ**